Medi-Cal for Kids & Teens

# ສິດທິປະໂຫຍດຕໍ່ກັບນະໂຍບາຍ Medi-Cal ຂອງທ່ານ

**ກະລຸນາຮັກສາ!**

**ຂໍ້ມູນທີ່ສຳຄັນເພື່ອຊ່ວຍເດັກນ້ອຍແລະໄວໜຸ່ມເຖິງອາຍຸ 21 ໄດ້ຮັບການດູແລທັງໝົດທີ່ເຂົາເຈົ້າຕ້ອງການ**

## ມີການບໍລິການປະເພດໃດແດ່ທີ່ເດັດນ້ອຍ ແລະ ຊາວໜຸ່ມ ທີ່ຈະໄດ້ຮັບເມື່ອເຂົາເຈົ້າເຖິງກະສຽນອາຍຸທີ່ໄດ້ຮັບນະໂຍບາຍ Medi-Cal?

ພາຍໃຕ້ກົດໝາຍຂອງລັດຄາລິຟໍເນຍ ແລະ ກົດໝາຍຂອງລັດຖະບານກາງ, ເດັກນ້ອຍ ແລະ ຊາວໜຸ່ມທຸກຜູ້ທີ່ມີກະສຽນອາຍຸເຖິງ 21 ປີ ຈະຕ້ອງໄດ້ລົງທະບຽນຮັບນະໂຍບາຍ Medi-Cal ຈຶ່ງຈະມີສິດທີ່ຈະ**ກວດພະຍາດ** ແລະ **ການປ້ອງກັນ** ແລະ **ອື່ນໆເປັນປົກກະຕິ. ການບໍລິການ ການປິ່ນປົວພະຍາດ** ທີ່ຈຳເປັນເພື່ອການເປັນຢູ່ ຫຼື ມີສຸຂະພາບດີ.

ສິດທິດັ່ງກ່າວນີ້ແມ່ນເປັນທີ່ຮູ້ຈັກກັນໃນເຊີ້ງກົດໝາຍຂອງລັດຖະບານກາງໂດຍເປັນເງື່ອນໄຂທາງດ້ານການກວດ, ການວິນິດໄສ ແລະ ການປິ່ນປົວທີ່ເກີດຂຶ້ນກ່ອນກຳນົດ ແລະ ເປັນໄລຍະ (EPSDT). ໂດຍຮັບປະກັນວ່າເດັກນ້ອຍທຸກຄົນທີ່ລົງທະບຽນໃນໂຍບາຍ Medi-Cal ຈະໄດ້ຮັບການເບິ່ງແຍງຕາມທີ່ເຂົາເຈົ້າຕ້ອງການເພື່ອເຕີບໃຫຍ່ໂດຍໃຫ້ມີສຸຂະພາບດີເທົ່າທີ່ເປັນໄປໄດ້. ໃນລັດ ຄາລິຟໍເນຍ, EPSDT ຖືກຮຽກວ່າ **Medi-Cal ສຳລັບເດັກ ແລະ ໄວລຸ່ນ**.

ເປັນການບໍລິການ **ໂດຍບໍ່ຄິດຄ່າ**, ຈົນກວ່າວ່າລູກ ຫຼື ຄົນໜຸ່ມສາວເຫຼົ່ານັ້ນສາມາດແຊຄ່າໃຊ້ຈ່າຍໄດ້ ເມື່ອພວກເຂົາມີເງື່ອນໄຂໄດ້ຮັບ ນະໂຍບາຍ Medi-Cal.

### ນະໂຍບາຍ Medi-Cal ສຳລັບເດັກນ້ອຍ ແລະ ໄວລຸ້ນຕ້ອງກວມເອົາການບໍລິການເຫຼົ່ານີ້ຖ້າມີຄວາມຈຳເປັນ, ໂດຍບໍ່ຈຳກັດ:

- ການບໍລິການດ້ານສຸຂະພາບທາງດ້ານກາຍຍະພາບ, ລວມທັງການດູແລປະຖົມພະຍາບານເບື້ອງຕົ້ນ ແລະ ການໄປພົບທ່ານໝໍຜູ້ຊ່ຽວຊານ
- ບໍລິການດ້ານສາຍຕາ, ລວມທັງແວ່ນຕາ
- ບໍລິການໄດ້ຍິນສຽງ
- ບໍລິການ ກວດເຊັກ ແລະ ຕິດຕາມສຸຂະພາບແຂ້ວ
- ການບໍລິການສຸຂະພາບຈິດ ແລະ ສິ່ງເສບຕິດ ຫຼື ການຕິດເຫຼົ້າ, ລວມທັງການປິ່ນປົວ
- ການປິ່ນປົວທາງດ້ານກາຍຍະພາບ, ອາຊີບ, ແລະ ການປາກເວົ້າ
- ອຸປະກອນການແພດ ແລະ ການສະໜອງອຸປະກອນທາງການແພດ, ເຊັ່ນ: ຕັ່ງເລື່ອນ, ລວມທັງອຸປະກອນການແພດທີ່ໃຊ້ເປັນໄລຍະ
- ການໃຊ້ຢາ, ທັງການຮັບຢາທີ່ເຄົາເຕີ ແລະ ຮັບຢາຕາມໃບສັ່ງ
- ການກວດໃນຫ້ອງທົດລອງ, ລວມທັງການກວດເລືອດເພື່ອກວດລະດັບສານສານຕົກຄ້າງ ແລະ ການກວດເຊື້ອພະຍາດຕິດເຊື້ອທາງເພດສຳພັນ (STI) ແລະ ຕິດຕາມດູແລທີ່ຈຳເປັນ.
- ການບໍລິການດ້ານສຸຂະພາບຢູ່ທີ່ບ້ານ, ລວມທັງການດູແລດ້ານພະຍາບານ
- ການປິ່ນປົວໃນໂຮງໝໍ ແລະ ສະຖານທີ່ປິ້ນປົວຕ່າງໆ
- ການບໍລິການສຸຂະພາບດ້ານຈະເລີນພັນ ແລະ ທາງເພດສຳພັນ ເຊັ່ນ: ການຄຸມກຳເນີດ ແລະ ການທຳແທ້ງ
- ກວດເຊັກການຖືພາ
- ກວດເຊັກ ແລະ ໃຫ້ການປິ່ນປົວ COVID-19
- ການປະສານງານກັບຄະນະໃຫ້ການດູແລ, ຖ້າລົງທະບຽນຢູ່ໃນແຜນນະໂຍບາຍໃຫ້ການດູແລທີ່ມີການຄຸ້ມຄອງ
- ການບໍລິການທາງການແພດທີ່ຈຳເປັນຕ່າງໆທັງໝົດທີ່ສາມາດໄດ້ຮັບການຄຸ້ມຄອງພາຍໃຕ້ນະໂຍບາຍ Medi-Cal (ຮຽກວ່າ "ການບໍລິການທີ່ມີຄວາມຈຳເປັນທາງການແພດ") ຕາມການກຳນົດໂດຍຜູ້ໃຫ້ບໍລິການທາງການແພດຂອງທ່ານ.

**ຖ້າທ່ານຕ້ອງການຈົດໝາຍສະບັບນີ້ ຫຼື ເອກະສານກ່ຽວກັບນະໂຍບາຍ Medi-Cal ໃນຮູບແບບອື່ນ ເຊັ່ນ: ຕົວອັກສອນທີ່ໃຫຍ່ກວ່າ, ສຽງ, CD, ຫຼື ຕົວອັກສອນນູນ, ໃຫ້ໂທຫາເບີ 1-833-284-0040.**

**ເດັກນ້ອຍ ແລະ ຊາວໜຸ່ມມີສິດໄດ້ຮັບການສະໜັບສະໜູນໂດຍບໍ່ເສຍຄ່າເພື່ອໄດ້ຮັບການເບິ່ງແຍງ, ເຊັ່ນ:**

- ການຂີ່ລົດ ໄປ-ມາ ໂດຍບໍ່ເສຍຄ່າຕາມນັດໝາຍ ຫຼື ໄປຮັບຢາ, ອຸປະກອນການແພດ ແລະ ການສະໜອງ
- ໃຫ້ການສະຫນັບສະຫນູນໃນການນັດຫມາຍທາງດ້ານການແພດ
- ຊ່ວຍຊອກຫາທ່ານຫມໍ ຫຼື ຜູ້ໃຫ້ບໍລິການດ້ານສຸຂະພາບ
- ການບໍລິການແປພາສາ (ທ່ານບໍ່ຈໍາເປັນຕ້ອງເອົານາຍແປພາສາຂອງທ່ານໄປ ເອງ ໃນການໄປພົບນາຍແພດ)

## ຄວາມຈໍາເປັນທາງການແພດ“ໝາຍເຖິງຫຍັງ”?

ສໍາລັບເດັກນ້ອຍ ແລະ ຊາວໜຸ່ມ, **ຈໍາເປັນທາງດ້ານການແພດ** ໝາຍເຖິງການບໍລິການປິ່ນປົວທີ່ຈໍາເປັນ, ແກ້ໄຂ, ຈັດການ ຫຼື ຟື້ນຟູ ສະພາບການເຈັບເປັຍ ຫຼື ດ້ານສຸຂະພາບ.

ປົກກະຕິແລ້ວທ່ານໝໍ ຫຼື ຜູ້ໃຫ້ການດູດ້ານແລສຸຂະພາບຂອງລູກຫຼານຂອງທ່ານຈະພິຈາລະນາເຖິງທີ່ທີ່ຕ້ອງການທີ່ຈໍາເປັນທາງການແພດ.

ບາງບໍລິການອາດຈະຕ້ອງໄດ້ຮັບການອະນຸມັດລ່ວງໜ້າ. ຖ້າຫາກການບໍລິການນັ້ນມີຄວາມຈໍາເປັນທາງດ້ານການປິ່ນປົວສໍາລັບເດັກນ້ອຍ ຫຼື ໄວຫນຸ່ມໃນໃນເກນ ອາຍຸ 21 ປີ, ຈໍານວນການບໍລິການ ຫຼື ການປິ່ນປົວບໍ່ສາມາດຖືກຈໍາກັດ. ຍົກຕົວຢ່າງ, ເດັກນ້ອຍຈະບໍ່ຖືກຈໍາກັດພຽງແຕ່ແວຕາຄູ່ຫນຶ່ງຕໍ່ທຸກໆສອງປີ. ຖ້າຫາກ ເດັກນ້ອຍນັ້ນມີແວ່ນຢູ່ແຕ່ຍັງມີບັນຫາໃນການເບິ່ງເຫັນ, ເຂົາເຈົ້າມີສິດໄດ້ຮັບໃບສັ່ງຈາກແພດຄືນໃໝ່ ແລະ ໄດ້ຮັບແວ່ນຕາໃໝ່ເມື່ອເຫັນວ່າມີຄວາມຈໍາເປັນ.

ຫ້ອງທີ 1

### Medi-Cal ຂອງລູກທ່ານ

ເດັກນ້ອຍ ແລະໄວໜຸ່ມໃນນະໂຍບາຍ Medi-Cal ຈະໄດ້ຮັບສິດທິປະໂຫຍດຂອງຕົນໃນສອງວິທີນີ້ດັ່ງຕໍ່ໄປນີ້:

1. **ການດູແລທີ່ໄດ້ຮັບການຄຸ້ມຄອງ** ໂດຍແຜນປະກັນສຸຂະພາບ, ແຜນດູແລດ້ານສຸຂະພາບຈິດ, ຫຼື ແຜນດູແລສຸຂະພາບແຂ້ວ, **ຫຼື**
2. **ຄ່າບໍລິການ** ໂດຍພະແນກບໍລິການການດູແລສຸຂະພາບຂອງລັດຄາລີຟໍເນຍ (DHCS), ອົງການຄຸ້ມຄອງແຜນນະໂຍບາຍ Medi-Cal ຂອງ ລັດ

ເອກະສານນີ້ອະທິບາຍວ່າຈະເຮັດແນວໃດຖ້າເດັກ ຫຼືໄວໜຸ່ມທີ່ລົງທະບຽນແລ້ວບໍ່ໄດ້ຮັບການບໍລິການທີ່ຈໍາເປັນໂດຍຜ່ານ **ການດູແລທີ່ໄດ້ຮັບ ການຄຸ້ມຄອງ ຫຼື ຄ່າບໍລິການ**. ອະທິບາຍວິທີການ:

- ການຍື່ນອຸທອນ
- ການໄຕ່ສວນຂັ້ນລັດ
- ສົ່ງຄໍາຮ້ອງທຸກ

ສໍາລັບການຊ່ວຍເຫຼືອໃນການຮັບການບໍລິການ ຫຼື ຄໍາຖາມກ່ຽວກັບສິດທິປະໂຫຍດຂອງທ່ານ, ກະລຸນາໂທຫາສາຍດ່ວນເພື່ອຂໍຄວາມຊ່ວຍເຫຼືອສະມາຊິກ ຄະນະຄຸ້ມຄອງນະໂຍບາຍ Medi-Cal ທີ່ເບີ **1-800-541-5555**.

## ທ່ານຄວນເຮັດແນວໃດຖ້າຫາກການດູແລລູກຂອງທ່ານ' ຖືກປະຕິເສດ, ຊັກຊ້າ, ຫຼຸດລົງ, ຫຼື ຖືກຢຸດເຊົາ?

ຖ້າຫາກການດູແລລູກຫຼານຂອງທ່ານຖືກປະຕິເສດ, ຊັກຊ້າ, ຫຼຸດລົງ, ຫຼື ຖືກຢຸດເຊົາ ແລະ ທ່ານບໍ່ເຫັນດີກັບການຕັດສິນໃຈດັ່ງທີ່ໄດ້ອະທິບາຍໄວ້ໃນຫນັງສືແຈ້ງການຂອງທ່ານ, ທ່ານສາມາດສະເໜີໃຫ້ມີການທົບທວນຄືນ ແລະ ຍົກເລີກການຕັດສິນໃຈດັ່ງກ່າວ.

ນີ້ແມ່ນເພື່ອເປັນການສະຫນັບສະຫນູນລູກຫຼານຂອງທ່ານເພື່ອທີ່ຈະໄດ້ຮັບການເບິ່ງແຍງດູແລຕາມທີ່ພວກເຂົາຕ້ອງການ ແລະ ມີສິດທີ່ຈະໄດ້ຮັບ. ລູກຫຼານຂອງທ່ານມີສິດຍື່ນ**ຄຳອຸທອນ**, ຮ້ອງຂໍໃຫ້ມີ **ການໄຕ່ສວນຂັ້ນລັດ**, ຫຼື ສົ່ງ **ຄຳຮ້ອງທຸກ**. ບໍ່ມີການລົງໂທດໃດໆສຳລັບການດຳເນີນການເຫຼົ່ານີ້.

ບໍ່ວ່າຈະເປັນການອຸທອນຂອງທ່ານ, ການໄຕ່ສວນຂັ້ນລັດ, ຫຼື ການຮ້ອງທຸກຈະສຳເລັດ ຫຼື ບໍ່, ການຄຸ້ມຄອງດ້ານນະໂຍບາຍ Medi-Cal ຂອງລູກຫຼານທ່ານຈະ **ບໍ່** ສິ້ນສຸດເພາະວ່າທ່ານໄດ້ດຳເນີນການຕ່າງໆເຫຼົ່ານີ້.

**ການອຸທອນ** ຕ້ອງການແຜນການດູແລລູກຫຼານຂອງທ່ານເພື່ອທົບທວນຄືນຕໍ່ກັບການປະຕິເສດການບໍລິການ, ການຊັກຊ້າ, ການຫຼຸດຜ່ອນ ຫຼື ການຢຸດເຊົາການບໍລິການເພື່ອຊອກຮູ້ ສາເຫດວ່າພວກເຂົາເຫັນດີກັບທ່ານຫຼືບໍ່.

**ການໄຕ່ສວນຂັ້ນລັດ** ຈະເປີດໂອກາດມີການປຶດສາຫຼືກັບຜູ້ພິພາກສາເພື່ອທົບທວນຄືນການຕັດສິນຕໍ່ກັບແຜນການດູແລທີ່ໄດ້ຮັບການຄຸ້ມຄອງຂອງລູກຂອງທ່ານ ຫຼື ຄະນະຄຸ້ມຄອງແຜນ DHCS (ອົງການຄຸ້ມຄອງແຜນນະໂຍບາຍ Medi-Cal ຂອງພາກລັດ) ຕາມທີ່ທ່ານບໍ່ເຫັນດີນຳ.

**ຄຳຮ້ອງທຸກ** ແມ່ນຈະໃຊ້ສະເພາະເລື່ອງຕ່າງໆທີ່ທ່ານບໍ່ພໍໃຈ ຫຼື ບໍ່ເຫັນດີກັບການອຸທອນ ຫຼື ການໄຕ່ສວນຂັ້ນລັດແຜນນະໂຍບາຍບໍ່ໄດ້ກວມເອົາ. ໝາຍເຖິງບັນຫາ ຫຼື ຄວາມກັງວົນໃຈກ່ຽວກັບແຜນການດູແລທີ່ໄດ້ຮັບຄຸ້ມຄອງຂອງລູກຫຼານຂອງທ່ານ ຫຼື DHCS ທີ່ບໍ່ໄດ້ທຳການການປະຕິເສດ, ການຊັກຊ້າ, ການຫຼຸດຜ່ອນ ຫຼື ມີການຢຸດເຊົາໃຫ້ການບໍລິການ.

ທ່ານຍັງສາມາດສົ່ງຄຳຮ້ອງທຸກໃຫ້ແຜນການດູແລທີ່ມີການຈັດການຂອງລູກທ່ານເພື່ອສະແດງຄວາມບໍ່ພໍໃຈທີ່ກ່ຽວຂ້ອງກັບການບໍລິການທີ່ຄຸ້ມຄອງຂອງລູກທ່ານ, ລວມທັງຄຸນນະພາບການດູແລ ຫຼື ການເຂົ້າເຖິງການດູແລ.

### ວິທີການຍື່ນອຸທອນ, ຂໍໃຫ້ມີການໄຕ່ສວນຂັ້ນລັດ, ຫຼື ຈັດສົ່ງຄຳຮ້ອງທຸກ

**ອ່ານຫນັງສືແຈ້ງການ.** ຖ້າຫາກແຜນນະໂຍບາຍການດູແລທີ່ມີການຄຸ້ມຄອງ, DHCS (ອົງການ Medi-Cal ຂອງພາກລັດ), ຫຼື ຜູ້ໃຫ້ບໍລິການປະຕິເສດ, ຫຼຸດລົງ, ຫຼື ຢຸດການບໍລິການແກ່ລູກຫຼານຂອງທ່ານ, ເຂົາເຈົ້າຈະຕ້ອງສົ່ງແຈ້ງການການປະຕິບັດດັ່ງກ່າວເປັນລາຍລັກອັກສອນ (ຍັງຮຽກວ່າ "ແຈ້ງການກ່ຽວກັບການນຳຈາລະນາດ້ານຜົນປະໂຫຍດທາງລົບ") ກັບການຕັດສິນໃຈຂອງເຂົາເຈົ້າ.

ທ່ານຕ້ອງໄດ້ຮັບແຈ້ງການນີ້ຢ່າງໜ້ອຍ**10** ມື້ກ່ອນທີ່ການປິ່ນປົວ ຫຼື ການບໍລິການຂອງລູກຫຼານຂອງທ່ານຈະຖືກຫຼຸດລົງ ຫຼື ຖືກຢຸດເຊົາ. ແຈ້ງການໄດ້ອະທິບາຍວ່າ:

- ເປັນຫຍັງ ແລະ ເຫດໃດ ທີ່ແຜນໃນການດູແລທີ່ຄຸ້ມຄອງຂອງລູກຫຼານທ່ານ ຫຼື DHCS ຈິ່ງຖືກພິຈາລະນາ
- ສິດທິລູກຂອງທ່ານ
- ວິທີການຍື່ນອຸທອນ ຫຼື ຂໍໃຫ້ມີການໄຕ່ສວນຂັ້ນລັດ

**ຖ້າຫາກວ່າທ່ານບໍ່ເຫັນດີກັບການຕັດສິນ,** ເປັນສິ່ງສຳຄັນທີ່ຈະຕ້ອງໄດ້ຍື່ນອຸທອນ ***ກ່ອນ*** ການບໍລິການຖືກຢຸດເຊົາ ຫຼື ຖືກຫຼຸດລົງເພື່ອໃຫ້ເຂົາເຈົ້າສາມາດສືບຕໍ່ໃນລະຫວ່າງການອຸທອນ ຫຼື ລະຫວ່າງການໄຕ່ສວນຂັ້ນລັດ.

**ບໍ່ຖ້າທ່ານ <u>*ໄດ້*</u> ໄດ້ຮັບແຈ້ງການ,** ໂທຫາ ໜ່ວຍງານຮັບຜິຊອບຜູ້ຊົມໃຊ້ບໍລິການດ້ານສຸຂະພາບ (HCA) ຕາມເບີໂທໃນໜ້າທີ 4. ທ່ານຍັງສາມາດປະກອບຄຳຮ້ອງເພື່ອຍື່ນອຸທອນໄດ້ຖ້າຫາກທ່ານບໍ່ໄດ້ຮັບແຈ້ງການ. ເພື່ອຮຽນຮູ້ວິທີຍື່ນການອຸທອນ, ຮ້ອງຂໍການໄຕ່ສວນຂັ້ນລັດ ຫຼື ສົ່ງຄຳຮ້ອງທຸກ, ອ່ານໜ້າທີ່ເຫຼືອ.

## ວິທີການຂໍຄວາມຊ່ວຍເຫຼືອ

### ສາຍຕົງເພື່ອຂໍຄວາມຊ່ວຍເຫຼືອສະມາຊິກ Medi-Cal

ສາຍຊ່ວຍເຫຼືອສະມາຊິກ Medi-Cal ໃຫ້ການຊ່ວຍເຫຼືອຟຣີ. ເຂົາເຈົ້າສາມາດເຊື່ອມໂຍງທ່ານກັບຫ້ອງການ Medi-Cal ປະຈຳຢູ່ທ້ອງຖິ່ນຂອງທ່ານ, ແຜນການດູແລທີ່ຖືກຄຸ້ມຄອງຂອງທ່ານ, ຫຼື ກັບຊັບພະຍາກອນ Medi-Cal ອື່ນໆເພື່ອຊ່ວຍຕອບຂໍ້ຊັກຖາມຂອງທ່ານກ່ຽວກັບນະໂຍບາຍ Medi-Cal.

- ໂທລະສັບ: 1-800-541-5555
- ຜ່ານທາງອອນລາຍ: www.dhcs.ca.gov/myMedi-Cal

### ຄະນະຄຸ້ມຄອງຜູ້ໃຊ້ບໍລິການດ້ານສຸຂະພາບ (HCA)

ຄະນະ HCA ຈະໃຫ້ການຊ່ວຍເຫຼືອທາງໂທລະສັບ ຫຼື ດ້ວຍຕົນເອງໂດຍບໍ່ເສຍຄ່າແກ່ຜູ້ລົງທະບຽນ Medi-Cal ເພື່ອແກ້ໄຂບັນຫາສຸຂະພາບ. ພວກເຂົາຍັງອາດຈະເຊື່ອມໂຍງທ່ານກັບຊັບພະຍາກອນທີ່ບໍ່ເສຍຄ່າເພື່ອຊ່ວຍແກ້ໄຂບັນຫາທາງດ້ານກົດໝາຍທີ່ກ່ຽວຂ້ອງກັບການດູແລສຸຂະພາບ.

- ໂທລະສັບ: 1-888-804-3536
- ຜ່ານອິນເຕີເນັດ healthconsumer.org

ຫ້ອງທີ 2

## ຖ້າຫາກທ່ານຄິດວ່າການຕັດສິນມີຄວາມຜິດພາດ

ຖ້າເຈົ້າເຊື່ອວ່ານະໂຍບາຍ Medi-Cal ຂອງລູກຫຼານຂອງທ່ານຖືກຢຸດເຊົາບໍລິການດ້ວຍຄວາມຜິດພາດ ຫຼື ລູກຂອງທ່ານຖືກພົບເຫັນວ່າເປັນການບໍ່ຖືກຕ້ອງໂດຍມີການຕັດມີສິດທີ່ຄວນໄດ້ໄດ້ຮັບຈາກນະໂຍບາຍ Medi-Cal ດັ່ງຕໍ່ໄປນີ້:

- ປະຕິບັດຕາມຄຳແນະນຳໃນແຈ້ງການເພື່ອອຸທອນ, **ຫຼື**
- ຄົ້ນຫາອົງການບໍລິການດ້ານສິດທິມະນຸດຂອງເມື່ອງປະຈຳທ້ອງຖິ່ນຂອງທ່ານໄດ້ທີ່ dhcs.ca.gov/COL

# ສິດທິຂອງລູກຫຼານຂອງທ່ານ' ຈະຢູ່ໃນການດູແລທີ່ມີການຄຸ້ມຄອງຈາກມະໂຍບາຍ Medi-Cal ແມ່ນຫຍັງ?

ຂໍ້ມູນຕໍ່ໄປນີ້ທີ່ນອນຢູ່ໃນໜ້າທີ 5-8 ການນຳໃຊ້ກັບທຸກລະບົບການດູແລທີ່ຖືກຄຸ້ມຄອງໃນມະໂຍບາຍ Medi-Cal. ເດັກນ້ອຍສ່ວນໃຫຍ່ທີ່ລົງທະບຽນຢູ່ໃນມະໂຍບາຍ Medi-Cal ທີ່ໄດ້ຮັບການເບິ່ງແຍງຂອງເຂົາເຈົ້າຜ່ານ **ແຜນການດູແລທີ່ຄຸ້ມຄອງໂດຍ Medi-Cal**. ແຜນມະໂຍບາຍແມ່ນສຳລັບການບໍລິການດ້ານສຸຂະພາບທາງດ້ານຮ່າງກາຍ. ມັນຍັງສຳລັບການບໍລິການສຸຂະພາບຈິດທີ່ຖືກຈຳກັດທີ່ເອີ້ນວ່າ "ການບໍລິການສຸຂະພາບຈິດແບບບໍ່ຈຳເພາະ."

ລະບົບການດູແລຕ່າງໆທີ່ມີການຄຸ້ມຄອງລວມມີ:

- **ການບໍລິການດ້ານສຸຂະພາບຈິດແບບຈຳເພາະສຳລັບການບໍລິການສຸຂະພາບທາງດ້ານພຶດຕິກຳທີ່ເຂັ້ມງວດ** ໂດຍຜ່ານແຜນມະໂຍບາຍດ້ານສຸຂະພາບຈິດຈະຖືກແຍກອອກຕ່າງຫາກ.
- **ລະບົບການສົ່ງມອບການການຮັບຢາຕາມມະໂຍບາຍ Medi-Cal** ສຳລັບການປິ່ນປົວການຕິດຢາເສບຕິດ ແລະ ຕິດເຫຼົ້າ.
- **ການຄຸ້ມຄອງການດູແລ້ດ້ານທັນຕະແພດ**ສຳລັບການດູແລແຂ້ວໃນເມືອງ Los Angeles ແລະ Sacramento. ອ່ານ **ຕາຕະລາງ 1** ໃນໜ້າ 8.

ຖ້າລູກຫຼານຂອງທ່ານມີບັນຫາໃນການໄດ້ຮັບຫຼືຮັກສາການບໍລິການທີ່ທ່ານຄິດວ່າຫນຶ່ງໃນແຜນການຂ້າງເທິງຄວນຈະກວມເອົາ, ຈົ່ງອ່ານຂ້າງຂໍ້ຄວາມລຸ່ມນີ້. ຖ້າລູກຫຼານຂອງທ່ານບໍ່ຢູ່ໃນແຜນມະໂຍບາຍ, ກະລຸນາອ່ານກ່ຽວກັບ**ຄ່າບໍລິການ ໃນໜ້າ 9**.

## ທ່ານຄວນຈະເຮັດແນວໃດຖ້າຫາກການດູແລລູກຂອງທ່ານ' ຖືກປະຕິເສດ, ຊັກຊ້າ, ຫຼຸດລົງ, ຫຼື ຖືກຢຸດເຊົາ ການຈັດການ?

### ຍື່ນໄຟລອຸທອນກັບແຜນການດູແລທີ່ຖືກຄຸ້ມຄອງແກ່ລູກຫຼານຂອທ່ານ

ທ່ານຕ້ອງເລີ່ມຕົ້ນໂດຍການຍື່ນ **ການອຸທອນ** ກັບແຜນມະໂຍບາຍການດູແລທີ່ມີການຄຸ້ມຄອງ. ເພື່ອຄົ້ນຫາແຜນຂອງທ່ານ, ໄປທີ່ www.dhcs.ca.gov/mmchpd. ການຍື່ນຄຳອຸທອນຮຽກຮ້ອງແຜນມະໂຍບາຍແກ່ລູກຫຼານຂອງທ່ານ ເພື່ອໄດ້ຮັບການທົບທວນຄືນຈາກການປະຕິເສດໃນການໃຫ້ການບໍລິການ, ການຊັກຊ້າ, ການຫຼຸດຜ່ອນ ຫຼື ການຖືກຢຸດເຊົາເພື່ອຮູ້ວ່າເຂົາເຈົ້າເຫັນດີກັບທ່ານຫຼືບໍ່. ທ່ານຕ້ອງຍື່ນໜັງສືອຸທອນກ່ອນທີ່ທ່ານຈະສາມາດຮ້ອງຂໍໃຫ້ມີການໄຕ່ສວນຂັ້ນລັດ.

- ຫຼັງຈາກທີ່ລູກຫຼານຂອງທ່ານໄດ້ຮັບໃບແຈ້ງການເປັນລາຍລັກອັກສອນຈາກແຜນການດູແລທີ່ຄຸ້ມຄອງຂອງເຂົາເຈົ້າ, ທ່ານກໍ່ສາມາດຍື່ນອຸທອນໄດ້. ທ່ານອາດຈະຍື່ນອຸທອນໄດ້ຖ້າຫາກທ່ານ **ບໍ່** ໄດ້ຮັບແຈ້ງການໃນການດຳເນີນການ.
- ທ່ານມີ **60** ວັນຕາມປະຕິທິນຫຼັງຈາກທີ່ທ່ານໄດ້ຮັບແຈ້ງການດຳເນີນການເພື່ອຍື່ນອຸທອນກັບແຜນດູແລທີ່ມີການຄຸ້ມຄອງ. ທ່ານສາມາດຍື່ນອຸທອນກັບແຜນມະໂຍບາຍເປັນລາຍລັກອັກສອນ, ຜ່ານທາງໂທລະສັບ, ຫຼື ຜ່ານທາງອອນໄລນ໌. ທ່ານສາມາດຄົ້ນຫາເບີຕິດຕໍ່ໄດ້ໃນ **ຕາຕະລາງ 1** ໃນໜ້າ 8.
- ຖ້າຫາກແຈ້ງການໃນພາກປະຕິບັດງານໃຫ້ຮູ້ວ່າການບໍລິການທີ່ລູກຫຼານຂອງທ່ານໄດ້ຮັບແລ້ວຈະຢຸດເຊົາ ຫຼື ຖືກຫຼຸດລົງ, ທ່ານອາດສະເໜີຂໍໃຫ້ລູກຫຼານຂອງທ່ານສືບຕໍ່ໄດ້ຮັບການບໍລິການໃນລະຫວ່າງການອຸທອນ. ເຊິ່ງຮຽກວ່າ**ການສືບຕໍ່ໄດ້ຮັບສິດທິປະໂຫຍດ**. ຮຽນຮູ້ວິທີການສະເໜີສິ່ງດັ່ງກ່າວນີ້, ຈົ່ງອ່ານ **ຫ້ອງທີ 3**.

ຫ້ອງທີ 3

### ວິທີການຮ້ອງຂໍໃຫ້ມີການສືບຕໍ່ສິດທິປະໂຫຍດໃນການດູແລທີ່ມີການຄຸ້ມຄອງ

ຖ້າແຈ້ງການບົງບອກເຖິງການບໍລິການທີ່ລູກຂອງທ່ານຈະໄດ້ຮັບນັ້ນຈະຖືກຢຸດເຊົາ ຫຼື ຖືກຫຼຸດລົງ, ທ່ານສາມາດຂໍ **ສືບຕໍ່ສິດທິປະໂຫຍດ** (ຍັງຮຽກວ່າ "ການໃຫ້ຄວາມຊ່ວຍເຫຼືອທີ່ຍັງຄ້າງຢູ່") ສຳລັບລູກຂອງທ່ານໃນລະຫວ່າງການອຸທອນ ຫຼື ການໄຕ່ສວນຂັ້ນລັດ.

- ທ່ານຕ້ອງຍື່ນອຸທອນ ຫຼື ສະເໜີຍັງພາກລັດໃຫ້ມີ ການໄຕ່ສວນຂັ້ນລັດ **ກ່ອນ**ການຢຸດໃຫ້ບໍລິການ ຫຼື ຖືກຕີໃຫ້ບໍລິການລົງ.
- ແຜນການດູແລທີ່ໄດ້ຮັບການຄຸ້ມຄອງຈະຕ້ອງແຈ້ງໃຫ້ທ່ານຊາບເປັນລາຍລັກອັກສອນຢ່າງໜ້ອຍ**10** ວັນປະຕິທິນກ່ອນທີ່ເຂົາເຈົ້າຈະມີແຜນຢຸດ ຫຼື ຫຼຸດໃຫ້ການບໍລິການແກ່ລູກຫຼານຂອງທ່ານ.

- ແຜນຄຸ້ມຄອງການດູແລຂອງລູກຫຼານຂອງທ່ານຈະຕ້ອງຖືກຮັບຮູ້ການອຸທອນເປັນລາຍລັກອັກສອນພາຍໃນ**5** ວັນປະຕິທິນຂອງວັນທີທີ່ເຂົາເຈົ້າຍື່ນອຸທອນ. ແຜນຍັງຈະຕ້ອງແຈ້ງໃຫ້ທ່ານຮັບຊາບຊື່, ເບີໂທລະສັບ ແລະ ທີ່ຢູ່ຂອງບຸກຄົນທີ່ຢູ່ໃນແຜນທີ່ສາມາດບົ່ງບອກທ່ານເພີ່ມເຕີມກ່ຽວກັບການອຸທອນ ແລະ ສະຖານະຂອງມັນ. ແຜນນະໂຍບາຍດັ່ງກ່າວແຈ້ງໃຫ້ທ່ານຮັບຊາບກ່ຽວກັບການພິຈາລະນາເປັນລາຍລັກອັກສອນພາຍໃນ**30** ວັນປະຕິທິນຂອງການຍື່ນໃບອຸທອນ. ເຊິ່ງຮຽກວ່າ ແຈ້ງການກ່ຽວກັບການແກ້ໄຂ.
- ຖ້າຫາກສະຖານະການລູກຫຼານຂອງທ່ານໃນສະຖານະການສຸກເສີນ ແລະ ລໍຖ້າ 30 ວັນຈະເຮັດໃຫ້ສະພາບຂອງເຂົາເຈົ້າຮ້າຍແຮງຂຶ້ນ, ທ່ານສາມາດສະເໜີໃຫ້ມີການຕັດສິນໃຈ**ແບບເລັ່ງດ່ວນ** (ໄວຂຶ້ນ). ຈະດຳເນີນການດັ່ງກ່າວນີ້ດ້ວຍວິທີໃດ, ຈົ່ງອ່ານ**ຫ້ອງ 4** ໃນໜ້ານີ້.
- ທ່ານສາມາດເຊື່ອມໂຍງແຜນນະໂຍບາຍການດູແລທີ່ມີການຄຸ້ມຄອງຂອງລູກຫຼານທ່ານດ້ວຍຄຳຖາມກ່ຽວກັບການອຸທອນໄດ້ຕະຫຼອດເວລາ. ສຳລັບນຳເບີຕິດຕໍ່, ອ່ານ **ຕາຕະລາງ 1** ໃນໜ້າທີ 8.

> ຫ້ອງ 4:
>
> **ເລັ່ງລັດ(ໄວຂຶ້ນ) ການອຸທອນ ຫຼືການໄຕ່ສວນຂັ້ນລັດ**
>
> ຖ້າຫາກລູກຫຼານຂອງທ່ານຕ້ອງການການອຸທອນ **ແບບເລັ່ງດ່ວນ** (ໄວຂຶ້ນ) ໃນການຍື່ນອຸທອນເພື່ອການໄຕ່ສວນຂັ້ນລັດ ອັນເນື່ອງມາຈາກສະຖານະພາບຂອງຊີວິດ, ສຸຂະພາບ, ຫຼື ຄວາມສາມາດໃນການເຮັດວຽກຂອງອະໄວຍະວະຂອງລູກຂອງທ່ານຕົກຢູ່ໃນສະຖານະການອັນຕະລາຍ, ຈົ່ງໂທຫາ [**1-800-743-8525**.
>
> ທ່ານສາມາດອ່ານເພີ່ມເຕີມໃນຄູ່ມືສຳລັບສະມາຊິກຂອງທ່ານກ່ຽວກັບວິທີການຍື່ນຄຳຮ້ອງສະເໜີໃຫ້ມີຂະບວນການເລັ່ງລັດ.

- ແຜນການດູແລທີ່ມີການຄຸ້ມຄອງລູກຫຼານຂອງທ່ານອາດຈະລວມເອົາທັງຂະບວນການທີ່ຮຽກວ່າຄະນະກວດເຊັກການແພດເອກະລາດ. ແຈ້ງການຖືກດຳເນີນຕາມຂະບວນການຂອງລູກຫຼານຂອງທ່ານຈະຖືກອະທິບາຍໄວ້ໃນຂະບວນການດັ່ງກ່າວນີ້. ຖ້າແຜນການດູແລທີ່ໄດ້ຮັບການຄຸ້ມຄອງຂອງລູກຫຼານຂອງທ່ານສະເໜີຕາມຂັ້ນຕອນດັ່ງກ່າວນີ້, ມັນຈະຖືກດຳເນີນການຫຼັງຈາກທີ່ທ່ານປະກອບຂໍ້ມູນການອຸທອນຂອງລູກຫຼານທ່ານຢ່າງຄົບຖ້ວນ. ເພື່ອສຶກສາເພີ່ມເຕີມກ່ຽວກັບຄະນະພິຈາລະນາທາງການແພດເອກະລາດ, ໃຫ້ໂທຫາພະແນກການດູແລດ້ານສຸຂະພາບທີ່ມີການຄຸ້ມຄອງຂອງລັດຄາລິຟໍເນຍທີ່ເບີ 1-888-466-2219 (TDD 1-877-688-9891). ຫຼື, ໄປຍັງ https://bit.ly/IMRCR.

## ສະເໜີໃຫ້ມີການໄຕ່ສວນຂັ້ນລັດກ່ຽວກັບນະໂຍບາຍ Medi-Cal

ຖ້າຂັ້ນຕອນການອຸທອນຂອງແຜນການດູແລທີ່ມີການຄຸ້ມຄອງຄົບຖ້ວນແລ້ວ ແລະ ທ່ານຍັງບໍ່ເຫັນດີກັບການພິຈາລະນາຕາມແຜນ, ທ່ານສາມາດສະເໜີໃຫ້ມີ**ການໄຕ່ສວນຂັ້ນລັດ** ສຳລັບລູກຫຼານຂອງທ່ານຄືນໃໝ່. ທ່ານຍັງສາມາດສະເໜີໃຫ້ມີການໄຕ່ສວນຂັ້ນລັດໄດ້ ຖ້າແຜນການດູແລທີ່ຄຸ້ມຄອງຂອງລູກຂອງທ່ານບໍ່ໄດ້ຮັບແຈ້ງການກ່ຽວກັບສິດທິຂອງລູກຫຼານທ່ານໃນການອຸທອນ ຫຼື ບໍ່ໄດ້ສົ່ງຕາມກາລະເວລາອັນຄວນ.

ການໄຕ່ສວນຂັ້ນລັດແມ່ນເປັນໂອກາດໃຫ້ທ່ານໄດ້ສະເໜີຕໍ່ຜູ້ພິພາກສາກ່ອນການເພື່ອທົບທວນຄືນແຜນການດູແລທີ່ມີການຄຸ້ມຄອງທີ່ທ່ານຍັງບໍ່ເຫັນດີ. ຜູ້ພິພາກສາຈະເຮັດວຽກກັບກົມບໍລິການສັງຄົມປະຈຳລັດຄາລິຟໍເນຍ, ໂດຍຈະບໍ່ແມ່ນພາກສ່ວນຮັດຜິດແຜນນະໂຍບາຍຂອງລູກຫຼານທ່ານໂດຍກົງ.

- ທ່ານຕ້ອງຍື່ນການໄຕ່ສວນຂັ້ນລັດພາຍໃນ **120** ວັນປະຕິທິນຂອງວັນທີທີ່ທ່ານໄດ້ຮັບການພິຈາລະນາເປັນລາຍລັກອັກສອນຕາມແຜນການດູແລທີ່ມີການຄຸ້ມຄອງກ່ຽວກັບການອຸທອນຂອງລູກຫຼານທ່ານ. ຜູ້ພິພາກສາທີ່ເປັນຄົນກາງທີ່ຈະທົບທວນສຳນວນຄະດີຂອງລູກຫຼານຂອງທ່ານ. ຖ້າຫາກການພິຈາລະນາທີ່ທ່ານສະເໜີໃຫ້ມີການພິຈາລະນາຄະດີຢຸດການບໍລິການທີ່ລູກຫຼານຂອງທ່ານໄດ້ຮັບແລ້ວ, ທ່ານອາດຈະສະເໜີໃຫ້ມີການໄດ້ຮັບສິດທິປະໂຫຍດຕໍ່ເນື່ອງສຳລັບລູກຫຼານຂອງທ່ານ. ອ່ານ **ຫ້ອງ 3** ໃນໜ້າທີ 5.
- ທ່ານອາດຈະຂໍໃຫ້ມີການໄຕ່ສວນຂັ້ນລັດຜ່ານທາງໂທລະສັບ, ຜ່ານທາງໄປສະນີ, ແຟັກ, ຫຼື ຜ່ານທາງອອນໄລນ໌. ໂທເບີ 1-800-743-8525. ຫຼື, ໄປຍັງ www.cdss.ca.gov/hearing-requests.
- ທ່ານມີສິດທີ່ຈະນຳບຸກຄົນໃດໜຶ່ງທີ່ເປັນຕົວແທນຂອງຕົນມາຮັບຟັງການໄຕ່ສວນເພື່ອຂໍການໄຕ່ສວນຂັ້ນລັດແທນລູກຫຼານຂອງທ່ານ. ທ່ານອາດພາໝູ່ມາໄດ້, ຍາດພີ່ນ້ອງ, ທະນາຍຄວາມ, ຫຼື ໃຜກໍຕາມທີ່ທ່ານເລືອກ. ເພື່ອຮຽນຮູ້ວິທີຂໍຄວາມຊ່ວຍເຫຼືອທາງດ້ານກົດໝາຍໂດຍບໍ່ຄິດຄ່າ, ກະລຸນາອ່ານ**ວິທີຂໍຄວາມຊ່ວຍເຫຼືອ** ຢູ່ໜ້າ 4.
- ທ່ານບໍ່ຈຳເປັນຕ້ອງຈ່າຍສຳລັບການໄຕ່ສວນຂັ້ນລັດ. ມັນບໍ່ເສຍຄ່າ.

- ລະບຸ **90** ວັນຕາມປະຕິທິນຫຼັງຈາກວັນທີທີ່ລູກຂອງທ່ານການໄຕ່ສວນຂັ້ນລັດ ການໄຕ່ສວນເພື່ອຕັດສິນຂັ້ນສຸດທ້າຍ. ຖ້າຫາກສະຖານະການລູກຫຼານຂອງທ່ານໃນສະຖານະການສຸກເສີນ ແລະ ກຳລັງລໍຖ້າ 90ວັນຈະເຮັດໃຫ້ສະພາບຂອງເຂົາເຈົ້າຮ້າຍແຮງຂຶ້ນ,ສາມາດສະເໜີໃຫ້ມີການພິຈາລະນາແບບເລັ່ງດ່ວນ **ແບບເລັ່ງດ່ວນ** (ໄວຂຶ້ນ). ຈົ່ງອ່ານ **ຫ້ອງທີ 4** ໃນໜ້າທີ 6.
- ສຳລັບການຊ່ວຍເຫຼືອເພີ່ມເຕີມ, ຈົ່ງອ່ານແຈ້ງການຈາກແຜນການດູແລທີ່ໄດ້ຮັບການຄຸ້ມຄອງຂອງລູກຫຼານຂອງທ່ານ. ຫຼື, ໂທເບີ 1-800-743-8525. ຫຼື, ໄປຍັງ www.dhcs.ca.gov/fair-hearing.

### ຕິດຕໍ່ເຈົ້າໜ້າທີ່ຮັບຜິດຊອບ

**Ombudsman** ແມ່ນບຸກຄົນທີ່ເຮັດວຽກສຳລັບ DHCS (ໜ່ວຍງານ Medi-Cal ຂອງລັດ). ວຽກຂອງພວກເຂົາແມ່ນເພື່ອຊ່ວຍທ່ານ ແລະ ລູກຂອງທ່ານດຳເນີນການແຜນການດູແລແບບມີການຈັດການຂອງລູກຂອງທ່ານ. ພວກເຂົາຈະຮັບຟັງ ແລະ ຊ່ວຍຕອບຄຳຖາມຂອງທ່ານ. ພວກເຂົາຍັງກວດສອບບັນຫາ, ອະທິບາຍສິດທິປະໂຫຍດ ແລະ ແນະນຳຕົວເລືອກຕ່າງໆໃຫ້ກັບທ່ານ. ທ່ານສາມາດໂທຫາ Ombudsman ໄດ້ທຸກເວລາ. ສິ່ງນີ້ລວມເຖິງ ເມື່ອລູກຂອງທ່ານໄດ້ຮັບແຈ້ງເຕືອນ, ໄດ້ຍື່ນການອຸທອນ, ຮ້ອງຂໍ ການໄຕ່ສວນຂັ້ນລັດ ຫຼື ສົ່ງຄຳຮ້ອງທຸກ. Ombudsman ແມ່ນສຳລັບຄົນທີ່ໄດ້ລົງທະບຽນໃນແຜນການດູແລແບບມີການຈັດການ.

ທ່ານສາມາດຕິດຕໍ່ຫາເຈົ້າໜ້າທີໄດ້ໂດຍ:

- ໂທລະສັບ: 1-888-452-8609
- Email: MMCDOmbudsmanOffice@dhcs.ca.gov
  - » ບໍ່ຈຳເປັນຕ້ອງລາຍງານຂໍ້ມູນດ້ານສຸຂະພາບຂອງສ່ວນບຸກຄົນລົງໃນອີເມວ.

ເພື່ອສຶກສາຂໍ້ມູນເພີ່ມເຕີມກ່ຽວກັບເຈົ້າໜ້າທີ່ຮັບຜິດຊອບ, ໃຫ້ໄປທີ່ www.dhcs.ca.gov/ombudsman.

## ຈະເຮັດແນວໃດຖ້າຫາກບໍ່ພໍໃຈກ່ຽວກັບການດູແລດ້ານສຸຂະພາບຂອງລູກຫຼານຂອງທ່ານ', ທ່ານໝໍ, ຫຼື ຜູ້ໃຫ້ບໍລິການດ້ານສຸຂະພາບທີ່ນອນຢູ່ໃນການດູແລທີ່ມີການຄຸ້ມຄອງ?

### ສົ່ງຄຳຮ້ອງທຸກ

ຖ້າທ່ານໝໍປະຕິບັດຕໍ່ລູກຂອງທ່ານບໍ່ດີ ຫຼື ຫຍາບຄາຍ, ຫຼື ທ່ານຫາກບໍ່ພໍໃຈຕໍ່ກັບຄຸນນະພາບຂອງການດູແລ, ຫຼື ທ່ານບໍ່ສາມາດຄົ້ນຫາທ່ານໝໍ, ທ່ານສາມາດສົ່ງ **ຄຳຮ້ອງທຸກ** ສຳລັບລູກຫຼານຂອງທ່ານໄດ້. ການຮ້ອງທຸກສຳລັບຄວາມບໍ່ເຫັນດີກ່ຽວກັບຂໍ້ຂ້ອງໃຈໃດໜຶ່ງທີ່ມີການອຸທອນ ຫຼື ຂໍຄວາມຍຸຕິທຳ ຈາກພາກລັດບໍ່ໄດ້ກວມເອົາ. ນັ້ນແມ່ນບັນຫາ ຫຼື ຄວາມກັງວົນໃຈທີ່ບໍ່ອາດປະຕິເສດໄດ້, ການຊັກຊ້າ, ຫຼຸດຜ່ອນ, ຫຼື ການຢຸດໃຫ້ການບໍລິການຕ່າງໆແກ່ລູກຫຼານຂອງທ່ານ. ທ່ານຍັງສາມາດສົ່ງຄຳຮ້ອງທຸກໃຫ້ແຜນການດູແລທີ່ມີການຈັດການຂອງລູກທ່ານເພື່ອສະແດງຄວາມບໍ່ພໍໃຈທີ່ກ່ຽວຂ້ອງກັບການບໍລິການທີ່ຄຸ້ມຄອງຂອງລູກທ່ານ. ລວມທັງຄຸນນະພາບການດູແລ ຫຼື ການເຂົ້າເຖິງການດູແລ.

- ທ່ານສາມາດສົ່ງຄຳຮ້ອງທຸກແກ່ເຂົາເຈົ້າໄດ້ທຸກເວລາ. ທ່ານສາມາດສົ່ງຜ່ານທາງໂທລະສັບ, ຫຼື ເປັນລາຍລັກອັກສອນຜ່ານອອນໄລນ໌ ຫຼື ຜ່ານທາງໄປສະນີ. ເພື່ອຈັດສົ່ງຄຳຮ້ອງທຸກ, ກະລຸນາຕິດຕໍ່ແຜນນະໂຍບາຍດູແລທີ່ມີການຄຸ້ມຄອງແກ່ລູກຫຼານຂອງທ່ານ. ສຳລັບນໍ້າເບີຕິດຕໍ່, ອ່ານ **ຕາຕະລາງ 1** ໃນໜ້າທີ່ 8.
- ແຜນການດູແລທີ່ໄດ້ຮັບການຄຸ້ມຄອງຂອງລູກຫຼານຂອງທ່ານຈະຕ້ອງຮັບແຈ້ງຄວາມຮ້ອງທຸກຂອງທ່ານເປັນລາຍລັກອັກສອນພາຍໃນ**5** ວັນປະຕິທິນຂອງວັນທີທີ່ເຂົາເຈົ້າໄດ້ຮັບແຈ້ງຄວາມ. ເຊິ່ງຈະລວມເອົາຊື່, ເບີໂທລະສັບ ແລະ ທີ່ຢູ່ຂອງບຸກຄົນທີ່ຢູ່ໃນແຜນທີ່ສາມາດບົ່ງບອກທ່ານເພີ່ມເຕີມກ່ຽວກັບການຮ້ອງທຸກ ແລະ ສະຖານະພາບຂອງລູກຫຼານຂອງທ່ານ.
- ແຜນນະໂຍບາຍດູແລທີ່ໄດ້ຮັບການຄຸ້ມຄອງຂອງລູກຫຼານຂອງທ່ານມີ **30**ວັນປະຕິທິນນັບຕັ້ງແຕ່ວັນທີທີ່ທ່ານສົ່ງຄຳຮ້ອງທຸກເພື່ອແກ້ໄຂຂໍ້ຂັດຂ້ອງແກ່ລູກຫຼານຂອງທ່ານ.

## ທ່ານຄວນຕິດຕໍ່ກັບໃຜເມື່ອມີຄໍາຖາມ?

ຕາຕະລາງ 1

### ລະບົບຄຸ້ມຄອງການແຜນດູແລສະຂຸພາບໂດຍລວມ ແລະ ຂໍ້ມູນໃນການຕິດຕໍ່

**ຄະນະຄຸ້ມຕອງແຜນດູແລ້ສຸຂພາບຜ່ານມະໂຍບາຍ Medi-Cal (MCMC)**

ເດັກນ້ອຍສ່ວນໃຫຍ່ໄດ້ຮັບການບໍລິການເຫຼົ່ານີ້ຜ່ານແຜນມະໂຍບາຍດູແລທີ່ໄດ້ຮັບການຄຸ້ມຄອງໂດຍ Medi-Cal:

- ຄວາມຕ້ອງການດ້ານສຸຂະພາບທາງຮ່າງກາຍ, ເຊັ່ນ: ກວດສຸຂະພາບເດັກ ແລະ ການສັກຢາ
- ຄວາມຕ້ອງການດ້ານສຸຂະພາບຈິດແບບບໍ່ຈໍາເພາະ, ເຊັ່ນ: ການປິ່ນປົວ ແລະ ວາງຢາ
- ການປະສານງານເພື່ອການດູແລ

ຖ້າລູກຫຼານຂອງທ່ານບໍ່ໄດ້ຮັບການບໍລິການທີ່ຈໍາເປັນ ຫຼື ທ່ານຍັງມີຄວາມກັງວົນ, ໃຫ້ໂທຫາຄະນະຄຸ້ມຄອງແຜນການດູແລທີ່ໄດ້ຮັບຄຸ້ມຄອງໂດຍ Medi-Cal ແກ່ລູຫຼານຂອງທ່ານ. ເບີໂທລະສັບຂອງແຜນແມ່ນຢູ່ໃນບັດປະຈໍາຕົວຂອງແຜນສໍາລັບລູກຫຼານຂອງທ່ານ. ພ້ອມນັ້ນຍັງມີຢູ່ໃນເວັບໄຊທ໌ຂອງແຜນມະໂຍບາຍ. ທ່ານຍັງສາມາດຄົ້ນຫາເບີໂທລະສັບຂອງພວກເຂົາໄດ້ທີ່ www.dhcs.ca.gov/mmchpd. ຫຼື, ໂທເບີ 916-449-5000.

**ບໍລິການສຸຂະພາບຈິດແບບສະເພາະ (SMHS)**

ເດັກນ້ອຍບາງຄົນຕ້ອງການການບໍລິການສຸຂະພາບຈິດແບບສະເພາະ, ເຊັ່ນ: ການດູແລສຸຂະພາບຈິດທີ່ຮ້າຍແຮງ, ຕ້ອງໄດ້ຮັບການດູແລດັ່ງກ່າວນີ້ຜ່ານການບໍລິການສຸຂະພາບຈິດແບບພິເສດ. ແຕ່ລະເມືອງຈະມີຄະນະຮັບຜິດແຜນມະໂຍບາຍດ້ານສຸຂະພາບຈິດ.

ຖ້າຫາກລູກຫຼານຂອງທ່ານບໍ່ໄດ້ຮັບການບໍລິການທີ່ຈໍາເປັນ ຫຼື ທ່ານຍັງມີຄວາມກັງວົນໃຈ, ຈົ່ງໂທຫາຄະນະຄຸ້ມຄອງແຜນສຸຂະພາບຈິດປະຈໍາເມືອງແກ່ລູກຫຼານຂອງທ່ານ. ທ່ານສາມາດຄົ້ນຫາເບີໂທລະສັບໄດ້ທີ່ www.dhcs.ca.gov/CMHP.

**ລະບົບການຈັດສົ່ງຢາ Medi-Cal ຈັດຂຶ້ນ (DMC-ODS)**

ເດັກນ້ອຍທີ່ຕ້ອງການການບໍລິການທີ່ກ່ຽວຂ້ອງກັບການໃຊ້ສານເສບຕິດເຊັ່ນ: ຢາໃຊ້ປິ່ນປົວຜູ້ເສບຢາເສບຕິດ ຫຼື ຕິດເຫຼົ້າ, ລວມທັງການໃຫ້ຄໍາປຶກສາ ແລະ ການປິ່ນປົວທາງດ້ານຄລີນິກອື່ນໆ, ເຊັ່ນ: ການໃຊ້ຢາໃນຄົນເຈັບ ຫຼື ການປິ່ນປົວຜູ້ຕິດເຫຼົ້າຢູ່ທີ່ສະຖານທີພັກພາອາໃສ, ເມື່ອມີຄວາມຈໍາເປັນ, ໄດ້ຮັບການເບິ່ງແຍງນີ້ຜ່ານລະບົບການຈັດສົ່ງທີ່ຈັດໂດຍມະໂຍບາຍ Drug Medi-Cal. ແຕ່ລະເມືອງຈະມີຄະນະຕູ້ມຄອງແຜນມະໂຍບາຍ DMC-ODS ຫຼື ຢູ່ໃນມະໂຍບານ Drug Medi-Cal. ສໍາລັບຂໍ້ມູນເພີ່ເຕີມກ່ຽກັວມະໂຍບາຍDrug Medi-Calມ ຈົ່ງອ່ານ **ຕາຕະລາງ 2** ໃນໜ້າທີ່ 11.

ຖ້າລູກຂອງທ່ານບໍ່ໄດ້ຮັບການບໍລິການເຫຼົ່ານີ້ ຫຼື ທ່ານມີຄວາມກັງວົນໃຈ, ຈົ່ງໂທຫາຄະນະຮັບຜິດຊອບແຜນມະໂຍບາຍ DMC-ODS ຂອງລູກຫຼານຂອງທ່ານ. ເພື່ອຄົ້ນຫາເບີໂທລະສັບໄດ້ທີ່ www.dhcs.ca.gov/sud-cal.

**ການດູແລດ້ານທັນຕະກໍາທີ່ໄດ້ຮັບການຄຸ້ມຄອງ (Dental MC)**

ເດັກນ້ອຍບາງຄົນທີ່ອາໄສຢູ່ໃນລັດ Los Angeles County ຫຼື ເມືອງ Sacramento ຈະໄດ້ຮັບການບໍລິການດູແລດ້ານທັນຕະກໍາ, ລວມທັງການກວດແຂ້ວ ແລະ ທໍາຄວາມສະອາດແຂ້ວສອງຄັ້ງຕໍ່ປີ ແລະ ການດູແລສຸຂະພາບຊ່ອງປາກ, ຜ່ານແຜນມະໂຍບາຍ ດູແລດ້ານທັນຕະກໍາທີ່ໄດ້ຮັບການຄຸ້ມຄອງ. ເດັກນ້ອຍທີ່ອາໄສຢູ່ໃນເມືອງອື່ນໆທັງໝົດຈະໄດ້ຮັບການດູແລແຂ້ວຂອງເຂົາເຈົ້າຜ່ານຄ່າບໍລິການດ້ານທັນຕະກໍາ (FFS Dental). ເພື່ອສຶກສາເພີ່ມເຕີມກ່ຽວກັບມະໂຍບາຍ Dental FFS, ອ່ານ **ຕາຕະລາງ 2** ໃນໜ້າ 11.

ຖ້າທ່ານອາໄສຢູ່ໃນເມືອງ Los Angeles ຫຼື ເມືອງ Sacramento ແລະ ລູກຫຼານຂອງທ່ານບໍ່ໄດ້ຮັບການບໍລິການທີ່ຈໍາເປັນຫຼື ທ່ານມີຄວາມກັງວົນໃຈ, ຈົ່ງໂທຫາແຜນມະໂຍບາຍ Dental MC ຂອງລູກຫຼານຂອງທ່ານ. ເບີໂທລະສັບຈະຢູ່ໃນບັດປະຈໍາຕົວຂອງລູກຂອງທ່ານຜູ້ທີ່ໄດ້ຮັບມະໂຍບາຍ Dental MC. ມັນຍັງຢູ່ໃນເວັບໄຊທ໌ຂອງແຜນມະໂຍບາຍ Dental MC ຂອງລູກທ່ານ. ຫຼື, ໂທເບີ 1-800-322-6384. ທ່ານຍັງສາມາດຄົ້ນຫາເບີໂທລະສັບຂອງແຜນໄດ້ທີ່ https://bit.ly/DMC-Contact.

# ສິດທິປະໂຫຍດຂອງລູກຫຼານຂອງທ່ານ' ຈະຢູ່ໃນການດູແລທີ່ມີການຄຸ້ມຄອງຈາກມະໂຍບາຍ Medi-Cal ມີຫຍັງແດ່?

ຂໍ້ມູນຕໍ່ໄປນີ້ຢູ່ໃນໜ້າ 9-11 ນຳໃຊ້ກັບຄ່າບໍລິການມະໂຍບາຍ Medi-Cal (FFS). ເດັກນ້ອຍບາງຄົນທີ່ລົງທະບຽນຢູ່ໃນມະໂຍບາຍ Medi-Cal ຈະໄດ້ຮັບມະໂຍບາຍໃນການດູແລສຸຂະພາບຂອງຕົນຜ່ານ FFS. FFS ຍັງຮຽກວ່າ "ມະໂຍບາຍປົກກະຕິ" ຂອງ Medi-Cal. ເດັກນ້ອຍທີ່ນອນໃນ FFS ຈະໄດ້ຮັບການດູແລຂອງຕົນຜ່ານ DHCS (ອົງການ Medi-Cal ຂອງພາກລັດ). ແຜນການດູແລສຸຂະພາບທີ່ມີບໍ່ໄດ້ຮັບການຄຸ້ມຄອງມີສ່ວນຮ່ວມ. FFS ຈະປະກອບມີ Medi-Cal FFS ສຳລັບການບໍລິການດ້ານສຸຂະພາບທາງຮ່າງກາຍ ແລະ ຊຸດຂອງການບໍລິການດ້ານສຸຂະພາບຈິດທີ່ຖືກຈຳກັດທີ່ຮຽກວ່າ "ການບໍລິການດ້ານສຸຂະພາບຈິດທີ່ບໍ່ຈຳເພາະ", ມະໂຍບາຍດ້ານຢາ Medi-Cal ສຳລັບການບໍລິການປິ່ນປົວຢາເສບຕິດ ແລະ ຕິດເຫຼົ້າ, FFS ສຳລັບການດູແລແຂ້ວ, ແລະ Medi-Cal Rx ສຳລັບການໃຊ້ຢາ. ເພື່ອສຶກສາເພີ່ມເຕີມ, ຈົ່ງອ່ານ **ຕາຕະລາງ 2** ໃນໜ້າທີ່ 11.

ຖ້າລູກຫຼານຂອງທ່ານມີບັນຫາໃນການໄດ້ຮັບ ຫຼື ຮັກສາການບໍລິການທີ່ທ່ານຄິດວ່າຫນຶ່ງໃນແຜນທີ່ກ່າວມາຂ້າງເທິງຄວນຈະກວມເອົາ, ຈົ່ງອ່ານຂ້າງຂໍ້ຄວາມລຸ່ມນີ້. ເຖິງແມ່ນວ່າລູກຫຼານຂອງທ່ານບໍ່ໄດ້ຢູ່ໃນແຜນການດູແລທີ່ມີການຄຸ້ມຄອງ, ຖ້າລູກຫຼານຂອງທ່ານຕ້ອງການການດູແລດ້ານສຸຂະພາບຈິດທີ່ຮ້າຍແຮງ, ເຂົາເຈົ້າຈະໄດ້ຮັບການດູແລນີ້ໂດຍຜ່ານແຜນການບໍລິການດ້ານສຸຂະພາບຈິດສະເພາະ. ຈົ່ງສຶກສາເພີ່ມເຕີມ ແລະ ຄົ້ນຫາບ່ອນທີ່ຈະໂທເພື່ອນຂໍການຊ່ວຍເຫຼືອຈາກແຜນດ້ານສຸຂະພາບຈິດຂອງເມືອງ, ຈົ່ງອ່ານ **ຕາຕະລາງ 1** ໃນໜ້າ 8.

## ທ່ານສາມາດເຮັດຫຍັງໄດ້ແດ່ຖ້າຫາກ'ການດູແລລູກຫຼານຂອງທ່ານໃນ FFS ຖືກຊັກຊ້າ,ຖືກປະຕິເສດ, ຫຼຸດລົງ, ຫຼືຖືກຢຸດເຊົາ?

### ສະເໜີໃຫ້ມີການໄຕ່ສວນຂໍຄວາມຍຸຕິທຳຂອງພາກລັດລັດກ່ຽວກັບມະໂຍບາຍ Medi-Cal

**ການພິຈາລະນາຂໍຄວາມເປັນທຳຂອງລັດ** ແມ່ນເປັນໂອກາດໃຫ້ທ່ານໄດ້ສະເໜີຕໍ່ຜູ້ພິພາກສາກ່ອນການເພື່ອທົບທວນຄືນແຜນການດູແລທີ່ມີການຄຸ້ມຄອງDHCS ທີ່ທ່ານຍັງບໍ່ເຫັນດີ. ນີ້ລວມມີການປະຕິເສດການບໍລິການ, ການຊັກຊ້າ, ການຫຼຸດຜ່ອນ, ຫຼືການຢຸດເຊົາ. ຜູ້ພິພາກສາເຮັດວຽກໃຫ້ພະແນກບໍລິການສັງຄົມຂອງລັດຄາລິຟໍເນຍ, ບໍ່ແມ່ນ DHCS.

- ຫຼັງຈາກທີ່ລູກຂອງທ່ານໄດ້ຮັບແຈ້ງການການປະຕິບັດຈາກ DHCS, ເຈົ້າອາດຈະຮ້ອງຂໍໃຫ້ມີການກວດສອບຍຸຕິທຳຂອງລັດ. ທ່ານອາດຈະຮ້ອງຂໍໃຫ້ມີການໄຕ່ສວນຍຸຕິທຳຂອງລັດຖ້າທ່ານບໍ່ໄດ້ຮັບແຈ້ງການປະຕິບັດງານ.
- ທ່ານຕ້ອງຮ້ອງຂໍໃຫ້ມີການໄຕ່ສວນຍຸຕິທຳຂອງລັດພາຍໃນ **90** ວັນປະຕິທິນຂອງວັນທີທີ່ທ່ານໄດ້ຮັບຫນັງສືແຈ້ງການການປະຕິບັດໂດຍ DHCS. ຜູ້ພິພາກສາທີ່ເປັນຄົນກາງທີ່ຈະທົບທວນສຳນວນຄະດີຂອງລູກຫຼານຂອງທ່ານ. ນອກນັ້ນທ່ານຍັງສາມາດຮ້ອງຂໍໃຫ້ມີການໄຕ່ສວນຍຸຕິທຳຂອງລັດໄດ້ທຸກເວລາໂດຍບໍ່ມີການແຈ້ງການດຳເນີນການ. ຖ້າຫາກການພິຈາລະນາທີ່ທ່ານສະເໜີໃຫ້ມີການພິຈາລະນາຄະດີຢຸດການບໍລິການທີ່ລູກຫຼານຂອງທ່ານໄດ້ຮັບແລ້ວ, ທ່ານອາດຈະສະເໜີໃຫ້ມີການໄດ້ຮັບສິດທິປະໂຫຍດຕໍ່ເນື່ອງສຳລັບລູກຫຼານຂອງທ່ານ. ອ່ານ **ຫ້ອງ 5** ໃນໜ້ານີ້.
- ທ່ານອາດຈະຂໍໃຫ້ມີການພິຈາລະນາຂອງລັດຜ່ານທາງໂທລະສັບ, ຜ່ານທາງໄປສະນີ, ແຟັກ, ຫຼື ຜ່ານທາງອອນໄລນ໌. ໂທເບີ 1-800-743-8525. ຫຼື, ໄປຍັງ www.cdss.ca.gov/hearing-requests.
- ທ່ານມີສິດທີ່ຈະນຳບຸກຄົນໃດຫນຶ່ງມາເປັນຕົວແທນຂອງທ່ານຢູ່ໃນການໄຕ່ສວນ. ທ່ານສາມາດນຳ ໝູ່, ຍາດພີ່ນ້ອງ, ທະນາຍຄວາມ, ຫຼື ຜູ້ໃດກໍ່ຕາມທີ່ທ່ານເລືອກ. ສຳລັບການຊ່ວຍເຫຼືອທາງດ້ານກົດໝາຍໂດຍບໍ່ໄດ້ຄິດຄ່າ, ກະລຸນາອ່ານ **ວິທີຂໍຄວາມຊ່ວຍເຫຼືອ** ຢູ່ໜ້າ 4.
- ທ່ານບໍ່ຈຳເປັນຕ້ອງຈ່າຍສຳລັບການໄຕ່ສວນເພື່ອຂໍຄວາມເປັນທຳຂອງພາກລັດ. ມັນບໍ່ເສຍຄ່າ.

ຫ້ອງທີ 5:

### ວິທີການສະເໜີ ສືບຕໍ່ດ້ານສິດປະໂຫຍດໃນຄ່າທຳນຽມການບໍລິການ

ຖ້າຫາກມີແຈ້ງການບົ່ງບອກເຖິງການບໍລິການທີ່ລູກຂອງທ່ານໄດ້ຮັບທີມີຢູ່ແລ້ວນັ້ນຈະຖືກຢຸດເຊົາ ຫຼື ຖືກຫຼຸດລົງ, ທ່ານອາດຈະຮ້ອງສະເໜີໃຫ້ມີ **ການສືບຕໍ່ຜົນປະໂຫຍດ** (ຍັງຮຽກວ່າ "ການໃຫ້ຄວາມຊ່ວຍເຫຼືອທີ່ຍັງຄ້າງຢູ່")ໃນລະຫວ່າງການໄຕ່ສວນຂໍຄວາມເປັນທຳໃນພາກລັດ.

- ທ່ານຕ້ອງຮ້ອງຂໍໃຫ້ມີການໄຕ່ສວນຍຸຕິທຳຂອງພາກລັດ **ກ່ອນ**ບໍລິການຖືກຢຸດ ຫຼື ຖືກຫຼຸດລົງ.
- ຄະນະຮັບຜິດຊອບ DHCS ແຜນການດູແລຈະຕ້ອງແຈ້ງໃຫ້ທ່ານຊາບເປັນລາຍລັກອັກສອນຢ່າງໜ້ອຍ**10** ວັນປະຕິທິນກ່ອນທີ່ເຂົາເຈົ້າຈະມີແຜນຢຸດ ຫຼື ຫຼຸດໃຫ້ການບໍລິການແກ່ລູກຫຼານຂອງທ່ານ.

- ລະບຸ **90**ວັນຕາມປະຕິທິນຫຼັງຈາກວັນທີທີ່ລູກຂອງທ່ານສະເໜີມາຍັງພາກລັດ ການໄຕ່ສວນເພື່ອຕັດສິນຂັ້ນສຸດທ້າຍ. ຖ້າຫາກສະຖານະການລູກຫຼານຂອງທ່ານໃນສະຖານະການສຸກເສີນ ແລະ ກຳລັງລໍຖ້າ 90ວັນ ຈະເຮັດໃຫ້ສະພາບຂອງເຂົາເຈົ້າຮ້າຍແຮງຂຶ້ນ,ສາມາດສະເໜີໃຫ້ມີການພິຈາລະນາແບບເລັ່ງດ່ວນ **ແບບເລັ່ງດ່ວນ** ດັ່ງກ່າວມາຂ້າງເທິງ. ອ່ານ **ຫ້ອງ 6** ໃນໜ້ານີ້.
- ສຳລັບການຊ່ວຍເຫຼືອເພີ່ມເຕີມ, ຈົ່ງອ່ານແຈ້ງການທີ່ໄດ້ຮັບຈາກ DHCS ເຖິງລູກຫຼານຂອງທ່ານ. ຫຼື, ໂທເບີ 1-800-743-8525. ຫຼື, ໄປຍັງ www.dhcs.ca.gov/fair-hearing.

ຫ້ອງທີ 6:

**ເລັ່ງລັດ(ໄວຂຶ້ນ) ການອຸທອນ ຫຼືຍຸດຕິທຳຂອງລັດ ການໄຕ່ສວນ**

ຖ້າລູກຂອງທ່ານຕ້ອງການການບໍລິການ **ເລັ່ງດ່ວນ** (ໄວຂຶ້ນ) ໃນການດຳເນີນຂະບວນຂໍຄວາມເປັນຍຸຕິທຳຂອງລັດອັນເນື່ອງຈາກວ່າວ່າຊີວິດ, ສຸຂະພາບ, ຫຼື ຄວາມສາມາດໃນການພາວະສຸຂະພາບຂອງລູກຫຼານທ່ານຢູ່ໃນພາວະອັນຕະລາຍ, ຈົ່ງໂທຫາ 1-800-743-8525.

## ຈະເຮັດແນວຖ້າຫາກບໍ່ພໍໃຈກ່ຽວການດູແລດ້ານສູຂະພາບຂອງລູກຫຼານຂອງທ່ານ'ທ່ານຫມໍ, ຫຼື ຜູ້ໃຫ້ບໍລິການດ້ານສຸຂະພາບທີ່ນອນຢູ່ໃນການດູແລ FFS?

### ສົ່ງຄຳຮ້ອງທຸກ

ຖ້າທ່ານຫມໍປະຕິບັດຕໍ່ລູກຂອງທ່ານບໍ່ດີ ຫຼື ຫຍາບຄາຍ, ຫຼື ທ່ານຫາກບໍ່ພໍໃຈຕໍ່ກັບຄຸນນະພາບຂອງການດູແລ, ຫຼື ທ່ານບໍ່ສາມາດຄົ້ນຫາທ່ານຫມໍ, ທ່ານສາມາດສົ່ງ **ຄຳຮ້ອງທຸກ** ສຳລັບລູກຫຼານຂອງທ່ານໄດ້. ກການຮ້ອງທຸກສຳລັບຄວາມບໍ່ເຫັນດີກ່ຽວກັບຂໍ້ຂ້ອງໃຈໃດໜຶ່ງທີ່ມີການຂໍຄວາມຍຸຕິທຳ ຈາກພາກລັດບໍ່ໄດ້ກວມເອົາ. ນັ້ນແມ່ນບັນຫາ ຫຼື ຄວາມກັງວົນໃຈ **ທີ່ບໍ່** ອາດປະຕິເສດໄດ້, ການຊັກຊ້າ, ຫຼຸດຜ່ອນ, ຫຼື ການຢຸດໃຫ້ການບໍລິການຕ່າງໆແກ່ລູກຫຼານຂອງທ່ານ.

- ເຈົ້າສາມາດຍື່ນຄຳຮ້ອງຮຽນແກ່ລູກຫຼານຂອງທ່ານສຳລັບ ນະໂຍບາຍດ້ານຢາ Medi-Cal, Dental FFS, ຫຼື Medi-Cal Rx ໄດ້ທຸກເວລາ. ທ່ານສາມາດສົ່ງຜ່ານທາງໂທລະສັບ, ຫຼື ເປັນລາຍລັກອັກສອນຜ່ານອອນໄລນ໌ ຫຼື ຜ່ານທາງໄປສະນີ. ເພື່ອສົ່ງຄຳຮ້ອງທຸກ, ຈົ່ງຕິດຕໍ່ຫາຄະຮັບຜິດຊອບ Drug Medi-Cal, Dental FFS, ຫຼື Medi-Cal Rx. ສຳລັບນໍ້າເບີຕິດຕໍ່, ອ່ານ **ຕາຕະລາງ 2** ໃນໜ້າທີ່ 11. ຈະ **ບໍ່ມີ** ຂະບວນການຮ້ອງທຸກສຳລັບນະໂຍບາຍ Medi-Cal FFS ສຳລັບການບໍລິການດ້ານສຸຂະພາບທາງດ້ານຮ່າງກາຍ ແລະ ການບໍລິການສຸຂະພາບຈິດແບບບໍ່ຈຳເພາະ.
- DHCS ຈະຕ້ອງໄດ້ເຮັດການແຈ້ງຮັບຮູ້ການຮ້ອງທຸກຂອງທ່ານເປັນລາຍລັກອັກສອນພາຍໃນ **5**ວັນປະຕິທິນນັບແຕ່ວັນທີທີ່ພວກເຂົາໄດ້ຮັບ. ເຊິ່ງຈະລວມເອົາຊື່, ເບີໂທລະສັບ ແລະ ທີ່ຢູ່ຂອງບຸກຄົນທີ່ຢູ່ໃນແຜນ DHCS ທີ່ສາມາດບົ່ງບອກທ່ານເພີ່ມເຕີມກ່ຽວກັບສະຖານະພາບຂອງລູກຫຼານຂອງທ່ານ.
- DHCS ມີ **30**ວັນຕາມວັນປະຕິທິນນັບຈາກວັນທ່ານໄດ້ສົ່ງຄຳຮ້ອງທຸກເພື່ອແກ້ໄຂທ່ານສຳລັບລູກຫຼານຂອງທ່ານ ກ່ຽວກັບນະໂຍບາຍ Dental FFS ແລະ Medi-Cal Rx. ນະໂຍບາຍກ່ຽວກັບຢາ Medi-Cal ມີກຳນົດ **90** ວັນຕາມປະຕິທິນສຳລັບຂະບວນການແກ້ໄຂຂໍ້ຂ້ອງໃຈຂອງລູກຫຼານຂອງທ່ານ.

## ທ່ານຄວນຕິດຕໍ່ຫາໃຜແດ່ເມື່ອມີຄຳຖາມ?

ຕາຕະລາງ 2

### ຄ່າບໍລິການໃນພາບລວມ ແລະ ຂໍ້ມູນການຕິດຕໍ່

**ຄ່າບໍລິການສຳລັບນະໂຍບາຍ Medi-Cal (Medi-Cal FFS)**

ເດັກນ້ອຍບາງຄົນ, ເຊັ່ນເດັກນ້ອຍບາງຄົນຢູ່ໃນການດູແລແບບອຸປະຖຳ, ຈະໄດ້ຮັບການບໍລິການດ້ານສຸຂະພາບທາງດ້ານຮ່າງກາຍຂອງເຂົາເຈົ້າຜ່ານນະໂຍບາຍ Medi-Cal FFS.

ຖ້າລູກຂອງທ່ານບໍ່ໄດ້ຮັບການບໍລິການເຫຼົ່ານີ້ ຫຼື ມີທ່ານມີຄວາມກັງວົນໃຈ, ໃຈ່ງໂທຫາເບີ 1-800-541-5555 (TDD 1-800-430-7077).

**ນະໂຍບາຍກ່ຽວກັບການຕິດຢາ Drug Medi-Cal (DMC)**

ເດັກນ້ອຍທີ່ຕ້ອງການການບໍລິການທີ່ກ່ຽວຂ້ອງກັບການໃຊ້ສານເສບຕິດເຊັ່ນ: ການປິ່ນປົວການເສບຢາເສບຕິດ ຫຼື ຕິດເຫຼົ້າ, ລວມທັງການໃຫ້ຄຳປຶກສາ ແລະ ການປິ່ນປົວທາງດ້ານຄລີນິກອື່ນໆ, ເຊັ່ນ: ການໃຊ້ຢາໃນຄົນເຈັບ ຫຼື ການປິ່ນປົວການຕິດເຫຼົ້າທີ່ບ່ອນຢູ່ອາໄສ ເມື່ອມີຄວາມຈຳເປັນ, ໃຫ້ໄດ້ຮັບການເບິ່ງແຍງນີ້ຜ່ານນະໂຍບາຍດ້ານ Drug Medi-Cal. ແຕ່ລະເມືອງຈະມີຄະນະຕູ້ມຄອງແຜນນະໂຍບາຍ DMC-ODS ຫຼື ຢູ່ໃນ DMC. ສຳລັບນຳເບີຕິດຕໍ່, ຈົ່ງອ່ານ **ຕາຕະລາງ 1** ໃນໜ້າທີ່ 8.

ຖ້າລູກຂອງທ່ານບໍ່ໄດ້ຮັບການບໍລິການເຫຼົ່ານີ້ ຫຼື ທ່ານມີຄວາມກັງວົນໃຈ, ຈົ່ງໂທຫາໂຄງການ DMC ຂອງລູກຫຼານຂອງທ່ານ. ເພື່ອຄົ້ນຫາເບີໂທລະສັບ, ໃຫ້ໄປທີ່ www.dhcs.ca.gov/sud-cal.

**ຄ່າທຳນຽມທາງທັນຕະກຳສຳລັບການບໍລິການ (Dental FFS)**

ເດັກນ້ອຍສ່ວນໃຫຍ່ຈະໄດ້ຮັບການບໍລິການທາງດ້ານທັນຕະກຳ Medi-Cal ຂອງເຂົາເຈົ້າໂດຍຜ່ານນະໂຍບາຍ Dental FFS. ນີ້ລວມມີການກວດແຂ້ວ ແລະທຳຄວາມສະອາດສອງຄັ້ງຕໍ່ປີ ແລະການດູແລສຸຂະພາບຊ່ອງປາກ.

ຖ້າລູກຫຼານຂອງທ່ານບໍ່ໄດ້ຮັບການບໍລິການເຫຼົ່ານີ້ ຫຼື ທ່ານມີຄວາມກັງວົນໃຈ, ຈົ່ງໂທຫາ 1-800-322-6384.
ເພື່ອສຶກສາເພີ່ມເຕີມ, ໃຫ້ໄປທີ່ smilecalifornia.org.

**Medi-Cal Rx**

ເດັກນ້ອຍຈະໄດ້ຮັບການບໍລິການນະໂຍບາຍຈາກຮ້ານຂາຍຢາ Medi-Cal ຜ່ານນະໂຍບາຍ Medi-Cal Rx. ເຊິ່ງລວມມີຢາຕາມໃບສັ່ງຢາຂອງແພດ ແລະ ຢາປິ່ນປົວນອກຮ້ານຂາຍຢາ, ຜະລິດຕະພັນໂພຊະນາການໃນລະບົບເຊັ່ນທໍ່ໃຫ້ອາຫານ, ແລະ ອຸປະກອນທາງການແພດ.

ຖ້າລູກຫຼານຂອງທ່ານບໍ່ໄດ້ຮັບການບໍລິການເຫຼົ່ານີ້ ຫຼື ທ່ານມີຄວາມກັງວົນໃຈ, ຈົ່ງໂທຫາ 1-800-977-2273.
ສຶກສາເພີ່ມເຕີມໄດ້ທີ່ https://bit.ly/3D1rQFV.